ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

===== ❀ =====

ກະຊວງການເງິນ

3381 ເລກທີ............/ກງ

ນະຄອນຫລວງວຽງຈັນ, ວັນທີ 18 NOV 2013

# ລະບຽບວ່າດ້ວຍ
# ການຄຸ້ມຄອງການເຄື່ອນໄຫວອອງການ
# ຈົດທະບຽນການຄ້ຳປະກັນດ້ວຍສັງຫາລິມະຊັບທາງເອເລັກໂຕຣນິກ

- ອີງຕາມ ກົດໝາຍ ວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ສະບັບເລກທີ 06/ສພຊ, ລົງວັນທີ 20 ພຶດສະພາ 2005;
- ອີງຕາມ ດຳລັດຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ສະບັບເລກທີ178/ນຍ, ລົງວັນທີ 20 ມິຖຸນາ 2011;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການສ້າງຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນສະບັບເລກທີ 80/ນຍ, ລົງວັນທີ 28 ກຸມພາ 2007.

## ລັດຖະມົນຕີວ່າການກະຊວງການເງິນ ອອກລະບຽບການ ດັ່ງຕໍ່ໄປນີ້:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ລະບຽບການສະບັບນີ້ ກຳນົດຫຼັກການ, ລະບຽບການ, ວິທີການ ແລະ ຂັ້ນຕອນກ່ຽວກັບການແຈ້ງຈົດທະບຽນການຄ້ຳປະກັນດ້ວຍສັງຫາລິມະຊັບໂດຍຜ່ານລະບົບເອເລັກໂຕຣນິກ ເພື່ອໃຫ້ເຈົ້າໜີ້ທີ່ມີການຄ້ຳປະກັນສາມາດຈົດທະບຽນການແຈ້ງການການຄ້ຳປະກັນດ້ວຍສັງຫາລິມະຊັບ ຊຶ່ງເປັນການຄ້ຳປະກັນຕໍ່ພັນທະໃດໜຶ່ງ ຫຼື ຫຼາຍພັນທະຂອງລູກໜີ້ໂດຍປະກາດໃຫ້ສາທາລະນະຊົນຮູ້ກ່ຽວກັບການມີການຄ້ຳປະກັນຢູ່ໃນຫຼັກຊັບດັ່ງກ່າວເພື່ອເຕືອນໃຫ້ບຸກຄົນທີ່ສາມ ຊຶ່ງອາດຈະມີຄວາມຕ້ອງການໃນການຮັບເອົາການຄ້ຳປະກັນໃນຫຼັກຊັບດັ່ງກ່າວໃນລຳດັບຖັດໄປ.ການຈົດທະບຽນການຄ້ຳປະກັນເຮັດໃຫ້ເຈົ້າໜີ້ທີ່ມີການຄ້ຳປະກັນມີບູລິມະສິດໄດ້ຮັບການໃຊ້ແທນກ່ອນບຸກຄົນທີ່ສາມທີ່ເປັນເຈົ້າໜີ້ໃນຊັບຄ້ຳປະກັນອັນດຽວກັນ.

**ມາດຕາ 2 ການອະທິບາຍຄຳສັບ**

1. ຄຳສັບທີ່ໃຊ້ໃນກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ຫຼື ດຳລັດຈັດຕັ້ງປະຕິບັດ ກົດໝາຍດັ່ງກ່າວແມ່ນມີຄວາມໝາຍດຽວກັນກັບຄຳສັບທີ່ໃຊ້ຢູ່ໃນລະບຽບການສະບັບນີ້.
2. ຄຳສັບອື່ນໆ ທີ່ນຳໃຊ້ຢູ່ໃນລະບຽບການສະບັບນີ້ມີຄວາມໝາຍ ດັ່ງນີ້:

   ການຄ້ຳປະກັນຕາມກົດໝາຍ: ແມ່ນການຄ້ຳປະກັນການໃຊ້ແທນໜີ້ສິນໃຫ້ແກ່ອົງການຈັດຕັ້ງຂອງລັດ ຫຼື ຂອງບຸກຄົນອື່ນທີ່ມີການຄ້ຳປະກັນຕາມກົດໝາຍ ຢູ່ໃນສັງຫາລິມະຊັບຂອງລູກໜີ້.

ການແຈ້ງຈົດທະບຽນການຄໍ້າປະກັນ: ຄໍາສັບນີ້ລວມເອົາການແຈ້ງກ່ຽວກັບການຄໍ້າປະກັນເບື້ອງຕົ້ນ ຫຼືການຄໍ້າປະກັນຕາມກົດໝາຍ ແລະ ການປ່ຽນແປງການແຈ້ງກ່ຽວກັບການຄໍ້າປະກັນ ເຊັ່ນ: ການແຈ້ງດັດແກ້, ການແຈ້ງສືບຕໍ່ ແລະ ການແຈ້ງການສິ້ນສຸດການຄໍ້າປະກັນ, ເວັ້ນເສຍຈະມີການກໍານົດໄວ້ເປັນຢ່າງອື່ນໃນກົດໝາຍ, ດໍາລັດ ຫຼື ລະບຽບການສະບັບນີ້.

ການຄໍ້າປະກັນທີ່ເກີດຂຶ້ນກ່ອນລະບຽບການສະບັບນີ້: ແມ່ນການຄໍ້າປະກັນໃນສັງຫາລິມະຊັບທີ່ເກີດຂຶ້ນກ່ອນມື້ທີ່ຫ້ອງການຈົດທະບຽນເລີ່ມດໍາເນີນວຽກງານ ແລະ ຖືກຄຸ້ມຄອງໂດຍກົດໝາຍວ່າດ້ວຍການຄໍ້າປະກັນການປະຕິບັດສັນຍາ ແລະ ດໍາລັດຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ. ການຄໍ້າປະກັນ ທີ່ເກີດຂຶ້ນກ່ອນໜ້ານີ້ລວມເອົາການຊວດຈໍາ, ການຂາຍທີ່ບໍ່ໄດ້ໂອນກໍາມະສິດ ແລະ ການຄໍ້າປະກັນອື່ນໆຢູ່ໃນສັງຫາລິມະຊັບຊຶ່ງເປັນການຄໍ້າປະກັນການປະຕິບັດພັນທະໃດໜຶ່ງ.

### ມາດຕາ 3 ຂອບເຂດນໍາໃຊ້

ລະບຽບການສະບັບນີ້ ນໍາໃຊ້ສໍາລັບການແຈ້ງຈົດທະບຽນການຄໍ້າປະກັນດ້ວຍສັງຫາລິມະຊັບ ຜ່ານລະບົບຈົດທະບຽນການຄໍ້າປະກັນທາງເອເລັກໂຕຣນິກ ລວມທັງການຄໍ້າປະກັນດ້ວຍກະແສເງິນສົດ, ລາຍຮັບປະຈຸບັນ ແລະ ໃນອານາຄົດ, ໜີ້ທີ່ຕ້ອງຮັບ, ຜະລິດຕະພັນ ແລະ ຜົນຜະລິດຈາກອະສັງຫາລິມະຊັບ.

## ໝວດທີ II
## ການສ້າງຕັ້ງ ແລະ ການດໍາເນີນງານ

### ມາດຕາ 4 ການສ້າງຕັ້ງຫ້ອງການຈົດທະບຽນການຄໍ້າປະກັນດ້ວຍສັງຫາລິມະຊັບ

ຫ້ອງການຈົດທະບຽນການຄໍ້າປະກັນດ້ວຍສັງຫາລິມະຊັບໂດຍຜ່ານລະບົບເອເລັກໂຕຣນິກ ແມ່ນໄດ້ສ້າງຕັ້ງຂຶ້ນ ຕາມລະບຽບການສະບັບນີ້ຢູ່ທີ່ກະຊວງການເງິນ.

ທີ່ຕັ້ງ, ພາລະບົດບາດ, ໂຄງຮ່າງການຈັດຕັ້ງ, ສິດ ແລະ ໜ້າທີ່ຂອງຫ້ອງການຈົດທະບຽນການຄໍ້າປະກັນດ້ວຍສັງຫາລິມະຊັບ ແມ່ນຈະໄດ້ກໍານົດໄວ້ໃນລະບຽບການສະເພາະຂອງກະຊວງການເງິນ.

### ມາດຕາ 5 ການດໍາເນີນວຽກງານຂອງຫ້ອງການຈົດທະບຽນ

ຫ້ອງການຈົດທະບຽນການຄໍ້າປະກັນດ້ວຍສັງຫາລິມະຊັບໂດຍຜ່ານລະບົບເອເລັກໂຕຣນິກ ທີ່ໄດ້ສ້າງຕັ້ງຂຶ້ນ, ດໍາເນີນງານ, ບໍາລຸງຮັກສາ ແລະ ປັບປຸງລະບົບເອເລັກໂຕຣນິກ ແລະ ຊອບແວ ເພື່ອຮັບປະກັນການຈົດທະບຽນການຄໍ້າປະກັນໃຫ້ມີຜົນສັກສິດຕາມກໍານົດເວລາ ແນໃສ່ອໍານວຍຄວາມສະດວກໃຫ້ແກ່ການດໍາເນີນວຽກງານ ແລະ ໄດ້ຮັບການປັບປຸງລະບົບໃນແຕ່ລະໄລຍະຢ່າງເປັນລະບົບ.

ຊົ່ວໂມງເຮັດວຽກຂອງລະບົບຈົດທະບຽນ ສໍາລັບການແຈ້ງຈົດທະບຽນການຄໍ້າປະກັນ ແລະ ຊອກຄົ້ນຫາຂໍ້ມູນຜ່ານເວັບໄຊ້ ແມ່ນ 24 ຊົ່ວໂມງ/ມື້ ແລະ 7ມື້/ອາທິດ.

ຖ້າວ່າລະບົບເອເລັກໂຕຣນິກຂອງຫ້ອງການຈົດທະບຽນຈະຖືກໂຈະ ເພື່ອການບໍາລຸງຮັກສາ, ຫ້ອງການຈົດທະບຽນຕ້ອງໄດ້ແຈ້ງກໍານົດເວລາທີ່ຈະສໍາເລັດການສ້ອມແປງບໍາລຸງຮັກສາໃຫ້ພາກສ່ວນທີ່ກ່ຽວຂ້ອງຊາບໃນເວັບໄຊ້ຂອງຕົນ.

**ມາດຕາ 6 ຮູບແບບການບໍລິການຂອງຫ້ອງການຈົດທະບຽນ**

ຮູບແບບການບໍລິການ ຂອງຫ້ອງການຈົດທະບຽນ ມີດັ່ງນີ້:

1. ຫ້ອງການຈົດທະບຽນຈະສະໜອງການບໍລິການຈົດທະບຽນທາງເອເລັກໂຕຣນິກ ແລະ ການຊອກຄົ້ນຂໍ້ມູນກ່ຽວກັບການແຈ້ງຈົດທະບຽນ ໂດຍຜ່ານເວັບໄຊ້ຂອງຕົນ ແລະ ຈະບໍ່ມີການນຳໃຊ້ເຈ້ຍສຳລັບການຈົດທະບຽນ;
2. ການແຈ້ງຈົດທະບຽນຈະມີຜົນບັງຄັບໃຊ້ໃນທັນທີທັນໃດໃນເວລາການແຈ້ງຈົດທະບຽນດັ່ງກ່າວໄດ້ຖືກຮັບຮອງໂດຍລະບົບຈົດທະບຽນ ແລະ ຜົນຂອງການຊອກຄົ້ນຈະລວມເອົາການແຈ້ງທີ່ມີຜົນສັກສິດທັງໝົດໃນເວລາຊອກຄົ້ນດັ່ງກ່າວ.

**ມາດຕາ 7 ພາສາທີ່ນຳໃຊ້ໃນການຈົດທະບຽນ**

1. ຂໍ້ມູນແມ່ນຖືກລົງເປັນພາສາລາວ ຍົກເວັ້ນມີການລະບຸໄວ້ເປັນຢ່າງອື່ນໃນລະບຽບການສະບັບນີ້;
2. ຂໍ້ແນະນຳ, ບ່ອນຕື່ມຂໍ້ມູນ, ການສະໜອງຂໍ້ມູນຕ່າງໆ ແລະ ເນື້ອໃນອື່ນໆກ່ຽວກັບການຈົດທະບຽນແມ່ນສາມາດເບິ່ງເປັນພາສາລາວ ຫຼື ພາສາອັງກິດ ຕາມການເລືອກຂອງຜູ້ໃຊ້.

## ໝວດທີ III
## ການແຈ້ງຈົດທະບຽນການຄໍ້າປະກັນ
## ການປະຕິບັດສັນຍາ ແລະ ການຄໍ້າປະກັນຕາມກົດໝາຍ

**ມາດຕາ 8 ການແຈ້ງຈົດທະບຽນກ່ຽວກັບການຄໍ້າປະກັນຕາມກົດໝາຍ**

ໃນການແຈ້ງຈົດທະບຽນກ່ຽວກັບການຄໍ້າປະກັນຕາມກົດໝາຍ ແມ່ນໃຫ້ປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ເງື່ອນໄຂກ່ຽວກັບການຈົດທະບຽນການຄໍ້າປະກັນການປະຕິບັດສັນຍາ ຈະຖືກນຳໃຊ້ສຳລັບການແຈ້ງຈົດທະບຽນການຄໍ້າປະກັນຕາມກົດໝາຍ, ເວັ້ນເສຍແຕ່ໄດ້ກຳນົດໄວ້ເປັນຢ່າງອື່ນໃນມາດຕານີ້;
2. ການແຈ້ງຈົດທະບຽນການຄໍ້າປະກັນຕາມກົດໝາຍ ສາມາດຖືກຈົດທະບຽນໂດຍອົງການຂອງລັດສຳລັບໜີ້ສິນທີ່ເປັນພັນທະດ້ານພາສີ-ອາກອນ ໂດຍພະນັກງານປະຕິບັດຄຳຕັດສິນຂອງສານ ສຳລັບການບັງຄັບປະຕິບັດຄຳຕັດສິນຂອງສານ, ສານ ຫຼື ໂດຍຜູ້ຮັກສາຊັບໃນເວລາມີການດຳເນີນຄະດີກ່ຽວກັບການລົ້ມລະລາຍ;
3. ຫ້ອງການຈົດທະບຽນຈະຊີ້ໃຫ້ເຫັນວ່າ ການແຈ້ງຈົດທະບຽນດັ່ງກ່າວເປັນການແຈ້ງຈົດທະບຽນຕາມກົດໝາຍຢູ່ໃນບົດບັນທຶກຂອງການແຈ້ງຈົດທະບຽນ;
4. ອົງການຈັດຕັ້ງຂອງລັດ, ສານ ຫຼື ຜູ້ຮັກສາຊັບ ໃນກໍລະນີມີການລົ້ມລະລາຍຈະຖືວ່າເປັນເຈົ້າໜີ້ທີ່ມີການຄໍ້າປະກັນສຳລັບການແຈ້ງຈົດທະບຽນກ່ຽວກັບການຄໍ້າປະກັນຕາມກົດໝາຍ. ສ່ວນຜູ້ເສຍອາກອນ, ລູກໜີ້ຕາມຄຳຕັດສິນຂອງສານ ແລະ ບຸກຄົນຜູ້ລົ້ມລະລາຍຈະຖືວ່າເປັນລູກໜີ້ໃນກໍລະນີດັ່ງກ່າວນີ້.

**ມາດຕາ 9 ເນື້ອໃນຂອງການແຈ້ງຈົດທະບຽນເບື້ອງຕົ້ນກ່ຽວກັບການຄໍ້າປະກັນຕາມສັນຍາ ຫຼື ການຄໍ້າປະກັນຕາມກົດໝາຍ**

ເນື້ອໃນຂອງການແຈ້ງຈົດທະບຽນເບື້ອງຕົ້ນກ່ຽວກັບການຄໍ້າປະກັນຕາມສັນຍາ ຫຼື ການຄໍ້າປະກັນຕາມກົດໝາຍ ມີດັ່ງນີ້:

1. ຕ້ອງມີການລະບຸ ຊື່ລູກໜີ້ໜຶ່ງຄົນ ຫຼື ຫຼາຍຄົນ ຢູ່ໃນການແຈ້ງຈົດທະບຽນການຄໍ້າປະກັນ. ສຳລັບລູກໜີ້ແຕ່ລະຄົນຕ້ອງໄດ້ສະໜອງຂໍ້ມູນ ດັ່ງນີ້:

ກ. ຕ້ອງມີການບອກປະເພດຂອງລູກໜີ້ ຊຶ່ງອາດຈະມີຂໍ້ມູນ ດັ່ງນີ້:

(1) ພົນລະເມືອງ ຂອງ ສປປ ລາວ;

(2) ຄົນຕ່າງປະເທດ;

(3) ວິສາຫະກິດຂອງ ສປປ ລາວ ຫຼື ຂອງຕ່າງປະເທດທີ່ຈົດທະບຽນ ຢູ່ ສປປ ລາວ;

(4) ວິສາຫະກິດຂອງຕ່າງປະເທດ ທີ່ບໍ່ໄດ້ຈົດທະບຽນ ຢູ່ ສປປ ລາວ.

ຂ. ສຳລັບລູກໜີ້ແຕ່ລະຄົນ ແມ່ນຕ້ອງໄດ້ພິມຂໍ້ມູນເຂົ້າລະບົບ ຕາມທີ່ບົ່ງບອກໄວ້ ດັ່ງນີ້:

(1) ຖ້າວ່າລູກໜີ້ເປັນພົນລະເມືອງຂອງ ສປປ ລາວ: ຕ້ອງພິມຊື່ ແລະ ນາມສະກຸນ ຂອງລູກໜີ້ລົງໃສ່ໃນຫ້ອງທີ່ແຕກຕ່າງກັນໂດຍພິມເປັນອັກສອນລາວ. ຖ້າວ່າລູກໜີ້ມີພຽງຊື່ເທົ່ານັ້ນຊື່ດັ່ງກ່າວຕ້ອງຖືກພິມລົງຢູ່ໃນຫ້ອງສຳລັບການພິມຊື່ ແລະ ພິມເລກບັດປະຈຳຕົວ 13 ຕົວໜັງສື ແລະ ຕົວເລກຂອງລູກໜີ້ໃສ່. ຖ້າເລກບັດບໍ່ເຖິງ 13 ຕົວແມ່ນໃຫ້ພິມເລກ 0 ໃສ່ທາງໜ້າຂອງເລກບັດປະຈຳຕົວດັ່ງກ່າວ.

(2) ຖ້າລູກໜີ້ເປັນຄົນຕ່າງປະເທດ: ຕ້ອງພິມນາມສະກຸນຂອງລູກໜີ້ເປັນຕົວອັກສອນລາຕິນຕາມທີ່ໄດ້ຂຽນໄວ້ໃນ ໜັງສືຜ່ານແດນຂອງຜູ້ກ່ຽວ ແລະ ເລກບັດປະຈຳຕົວຄົນຕ່າງປະເທດ ທີ່ອອກໂດຍກະຊວງປ້ອງກັນຄວາມສະຫງົບ. ຊື່ຂອງລູກໜີ້ຕ້ອງພິມໃສ່ຫ້ອງໜຶ່ງຕ່າງຫາກເປັນຕົວອັກສອນລາຕິນ ແລະ ພິມຊື່ປະເທດຂອງໜັງສືຜ່ານແດນຂອງລູກໜີ້ໃສ່.

(3) ຖ້າລູກໜີ້ເປັນວິສາຫະກິດຂອງ ສປປ ລາວ ຫຼື ຂອງຕ່າງປະເທດທີ່ຈົດທະບຽນຢູ່ ສປປ ລາວ, ຕ້ອງພິມເລກທະບຽນວິສາຫະກິດ ແລະ ຊື່ວິສາຫະກິດເປັນຕົວອັກສອນລາວໃສ່.

(4) ຖ້າລູກໜີ້ແມ່ນ ວິສາຫະກິດຂອງຕ່າງປະເທດ ທີ່ບໍ່ໄດ້ຈົດທະບຽນ ຢູ່ ສປປ ລາວ ຕ້ອງພິມຊື່ຂອງວິສາຫະກິດຕາມເອກະສານຢັ້ງຢືນການສ້າງຕັ້ງວິສາຫະກິດເປັນຕົວອັກສອນລາຕິນໃສ່. ຖ້າວ່າຊື່ຢູ່ໃນເອກະສານກ່ຽວກັບການສ້າງຕັ້ງວິສາຫະກິດບໍ່ເປັນຕົວອັກສອນລາຕິນກໍ່ຕ້ອງໄດ້ແປເປັນຕົວອັກສອນລາຕິນແລ້ວພິມຕົວອັກສອນດັ່ງກ່າວໃສ່, ພ້ອມທັງພິມເລກທະບຽນວິສາຫະກິດໃນກໍລະນີເປັນການລົງທຶນໃນຂະແໜງການທົ່ວໄປ ຫຼື ເລກລະຫັດທະບຽນວິສາຫະກິດໃນໃບອະນຸຍາດລົງທຶນໃນກໍລະນີເປັນການລົງທຶນຂະແໜງສຳປະທານ.

ຄ. ສຳລັບທີ່ຢູ່ຂອງລູກໜີ້ແຕ່ລະຄົນ ແມ່ນສາມາດພິມຕາມທີ່ລະບຸໄວ້ ດັ່ງນີ້:

ເລກທີຂອງເຮືອນ/ໜ່ວຍ, ຊື່ ບ້ານ ຫຼື ຖະໜົນ (ຖ້າມີ) ເມືອງ, ແຂວງ ແລະ ປະເທດ.

2. ຕ້ອງມີການລະບຸເຈົ້າໜີ້ທີ່ມີການຄ້ຳປະກັນຄົນໜຶ່ງ ຫຼື ຫຼາຍຄົນ ຢູ່ໃນແຈ້ງການຈົດທະບຽນ.

ສຳລັບເຈົ້າໜີ້ທີ່ມີການຄ້ຳປະກັນແຕ່ລະຄົນແມ່ນສາມາດສະໜອງຂໍ້ມູນ ດັ່ງນີ້:

ກ. ຊື່ຂອງເຈົ້າໜີ້ທີ່ມີການຄ້ຳປະກັນຂອງແຕ່ລະຄົນ ຕ້ອງພິມລົງໃສ່ຫ້ອງສະເພາະບໍ່ວ່າຈະເປັນປະເພດໃດກໍ່ຕາມ;

ຂ. ພິມທີ່ຢູ່ຄົບຖ້ວນຂອງເຈົ້າໜີ້ທີ່ມີການຄ້ຳປະກັນໂດຍກວມເອົາເລກທີຂອງເຮືອນ/ໜ່ວຍ, ຊື່ ບ້ານ ຫຼື ຖະໜົນ (ຖ້າມີ), ເມືອງ, ແຂວງ ແລະ ປະເທດໃສ່. ຂໍ້ມູນກ່ຽວກັບເມືອງ ກໍ່ສາມາດພິມໃສ່ໄດ້;

ຄ. ເບີໂທລະສັບ ແລະ ທີ່ຢູ່ອີເມລຂອງເຈົ້າໜີ້ທີ່ມີການຄ້ຳປະກັນກໍ່ສາມາດພິມໃສ່ໄດ້.

3. ຂໍ້ມູນກ່ຽວກັບຫຼັກຊັບຄ້ຳປະກັນ ແມ່ນສາມາດລະບຸດ້ວຍວິທີໃດວິທີໜຶ່ງ ດັ່ງນີ້:

ກ. ສາມາດຂຽນການອະທິບາຍຫຼັກຊັບຄ້ຳປະກັນໂດຍຫຍໍ້ລົງໃສ່ລະບົບໄດ້. ການອະທິບາຍດັ່ງກ່າວອາດເປັນແບບສະເພາະ ຫຼື ລວມທົ່ວໄປ. ຖ້າວ່າຫຼັກຊັບຄ້ຳປະກັນເປັນຊັບຕິດຕັ້ງ ການອະທິບາຍດັ່ງກ່າວຕ້ອງລວມເອົາການອະທິບາຍກ່ຽວກັບອະສັງຫາລິມະຊັບຊຶ່ງຫຼັກຊັບຄ້ຳປະກັນໄດ້ຖືກຕິດຕັ້ງຕິດກັບ ຫຼືຈະຖືກຕິດຕັ້ງຕິດກັບ;

ຂ. ສາມາດພິມເລກຖັງຂອງຍານພາຫະນະໃສ່ຢູ່ໃນຫ້ອງຂໍ້ມູນທີ່ກ່ຽວຂ້ອງ ແລະ ສາມາດພິມເລກຖັງຂອງພາຫະນະດັ່ງກ່າວເຂົ້າໃນຫ້ອງຂໍ້ມູນທີ່ແຕກຕ່າງກັນ,ຖ້າວ່າມີຍານພາຫະນະຫຼາຍກວ່າໜຶ່ງຄັນລວມເຂົ້າຢູ່ໃນຫຼັກຊັບຄ້ຳປະກັນທັງໝົດທີ່ນຳໃຊ້ຄ້ຳປະກັນ;

ຄ. ຖ້າຫາກວ່າ ການອະທິບາຍກ່ຽວກັບຫຼັກຊັບຄ້ຳປະກັນ ມີເນື້ອໃນທີ່ຍາວ ແລະ ມີຢູ່ໃນເອກະສານແຕກຕ່າງກັນ ເຈົ້າໜີ້ທີ່ມີການຄ້ຳປະກັນສາມາດປ່ຽນເອກະສານໃຫ້ເປັນຮູບແບບ PDF ແລ້ວຄັດຕິດໃສ່ກັບຂໍ້ມູນຂອງການແຈ້ງຈົດທະບຽນການຄ້ຳປະກັນນັ້ນ.

4. ສຳລັບການແຈ້ງຈົດທະບຽນກ່ຽວກັບການຄ້ຳປະກັນການປະຕິບັດສັນຍາ ແມ່ນໃຫ້ສະໜອງຂໍ້ມູນທາງດ້ານສະຖິຕິດັ່ງນີ້ໃຫ້ແກ່ຫ້ອງການຈົດທະບຽນ ເພື່ອນຳໃຊ້ເຂົ້າໃນວຽກງານພາຍໃນຂອງຕົນ. ຂໍ້ມູນດັ່ງກ່າວສາມາດເປັນຂໍ້ມູນໃນຮູບແບບສະເພາະຕ່າງຫາກຊຶ່ງມີຄວາມແຕກຕ່າງຈາກຂໍ້ມູນທີ່ແຈ້ງໃຫ້ແກ່ສາທາລະນະຊົນ ຊາບ ແລະຂໍ້ມູນທາງດ້ານສະຖິຕິສຳລັບການຂຶ້ນທະບຽນໃດໜຶ່ງຈະໄດ້ຮັບການປົກປ້ອງໂດຍບໍ່ໃຫ້ມີການເປີດເຜີຍຕໍ່ສາທາລະນະຊົນ.ຫ້ອງການຈົດທະບຽນສາມາດສັງລວມຂໍ້ມູນທາງດ້ານສະຖິຕິສຳລັບການເປີດເຜີຍທົ່ວໄປໃຫ້ແກ່ສາທາລະນະຊົນຊາບ.

ກ. ຕ້ອມີການລະບຸມູນຄ່າຂອງພັນທະທີ່ມີການຄ້ຳປະກັນ, ໃຫ້ລະບຸມູນຄ່າສູງສຸດ ຕາມທີ່ກຳນົດໄວ້ໃນສັນຍາຄ້ຳປະກັນຖ້າຫາກພັນທະນັ້ນເປັນວົງເງິນສິນເຊື່ອ ຫຼື ພັນທະອື່ນໆທີ່ມູນຄ່າແຕກຕ່າງກັນໃນແຕ່ລະໄລຍະ ຕົວຢ່າງ: ຂອບເຂດຈຳກັດຂອງວົງເງິນສິນເຊື່ອ ຈະຖືວ່າເປັນມູນຄ່າຂອງພັນທະທີ່ມີການຄ້ຳປະກັນດັ່ງກ່າວ;

ຂ. ຕ້ອງມີການເປີດເຜີຍຂໍ້ມູນກ່ຽວກັບຂະໜາດຂອງລູກໜີ້ ຕາມປະເພດທຸລະກິດ ດັ່ງນີ້:

(1) ທຸລະກຳກ່ຽວກັບການຄ້ຳປະກັນການຊື້ເຄື່ອງໃຊ້ສ່ວນຕົວ ຫຼື ຄອບຄົວຂອງລູກໜີ້;

(2) ລູກໜີ້ ແມ່ນທຸລະກິດ ທີ່ມີພະນັກງານ 1 ຫຼື 2 ຄົນ;

(3) ລູກໜີ້ ແມ່ນທຸລະກິດ ທີ່ມີພະນັກງານ ລະຫວ່າງ 3 ຫາ 9 ຄົນ;

(4) ລູກໜີ້ ແມ່ນ ທຸລະກິດ ທີ່ມີພະນັກງານ ລະຫວ່າງ 10 ຫາ 99 ຄົນ;

(5) ລູກໜີ້ ແມ່ນທຸລະກິດ ທີ່ມີພະນັກງານ 100 ຄົນ ຫຼື ຫຼາຍກວ່ານັ້ນ.

## ມາດຕາ 10 ການແຈ້ງການປ່ຽນແປງການຈົດທະບຽນການຄ້ຳປະກັນເບື້ອງຕົ້ນ

ຜູ້ແຈ້ງຈົດທະບຽນສາມາດຈົດທະບຽນການປ່ຽນແປງການຈົດທະບຽນການຄ້ຳປະກັນໄດ້ຫຼາຍປະເພດ ຊຶ່ງສາມາດປ່ຽນແປງຂໍ້ມູນໃດໜຶ່ງ ທີ່ໄດ້ແຈ້ງຈົດທະບຽນການຄ້ຳປະກັນໄປແລ້ວໃນເບື້ອງຕົ້ນ ເຊັ່ນ: ການແຈ້ງກ່ຽວກັບການດັດແກ້ການຈົດທະບຽນການຄ້ຳປະກັນ, ການແຈ້ງກ່ຽວກັບການສືບຕໍ່ໃຫ້ການຈົດທະບຽນມີຜົນສັກສິດຕໍ່ໄປ ແລະ ການແຈ້ງກ່ຽວກັບການຍົກເລີກຜົນສັກສິດຂອງການແຈ້ງຈົດທະບຽນ ການຄ້ຳປະກັນຕໍ່ເຈົ້າໜີ້ໜຶ່ງຄົນ ຫຼື ຫຼາຍຄົນ. ແຕ່ລະການແຈ້ງກ່ຽວກັບການປ່ຽນແປງການຄ້ຳປະກັນຈະມີສ່ວນພົວພັນກັບການແຈ້ງຈົດທະບຽນເບື້ອງຕົ້ນໂດຍກ່ຽວພັນກັບເລກທີທະບຽນຂອງການແຈ້ງຈົດທະບຽນການຄ້ຳປະກັນໃນເບື້ອງຕົ້ນ ຊຶ່ງຜູ້ຈົດທະບຽນຈະຕ້ອງໄດ້ພິມລົງໃນລະບົບຈົດທະບຽນ ເພື່ອເລີ່ມດຳເນີນງານໃນຂະບວນການຈົດທະບຽນ. ແຕ່ລະການແຈ້ງກ່ຽວກັບການປ່ຽນແປງດັ່ງກ່າວຕ້ອງໄດ້ຮັບການຮັບຮອງຢ່າງໜ້ອຍໂດຍເຈົ້າໜີ້ທີ່ມີການຄ້ຳປະກັນໜຶ່ງຄົນ ຊຶ່ງຈະຕ້ອງໄດ້ລະບຸໃຫ້ເຫັນລາຍລະອຽດຂອງຜູ້ກ່ຽວໂດຍຜູ້ຈົດທະບຽນ.

ລະບຽບການສຳລັບການຈົດທະບຽນແຕ່ລະປະເພດຂອງການແຈ້ງປ່ຽນແປງການຄ້ຳປະກັນໃຫ້ປະຕິບັດ ດັ່ງນີ້:

1. ໃນການແຈ້ງກ່ຽວກັບການດັດແກ້ການຄ້ຳປະກັນ ແມ່ນຢ່າງໜ້ອຍຕ້ອງມີການປ່ຽນແປງຂໍ້ມູນໃດໜຶ່ງຢູ່ໃນການແຈ້ງດັ່ງກ່າວ ຊຶ່ງຈະບໍ່ມີຜົນກະທົບຕໍ່ຜົນສັກສິດ ຫຼື ມື້ສິ້ນສຸດອາຍຸຂອງການແຈ້ງດັ່ງກ່າວ. ການແຈ້ງກ່ຽວກັບການດັດແກ້ການຄ້ຳປະກັນຈະລວມເອົາທຸກຂໍ້ມູນທີ່ຈຳເປັນສຳລັບການແຈ້ງຈົດທະບຽນເບື້ອງຕົ້ນ; ໃນນັ້ນຈະລວມເອົາຂໍ້ມູນທີ່ມີການປ່ຽນແປງ ແລະ ຂໍ້ມູນທີ່ບໍ່ມີການປ່ຽນແປງ. ໃນການແຈ້ງກ່ຽວກັບການດັດແກ້ການຄ້ຳປະກັນຢ່າງໜ້ອຍຕ້ອງກວມເອົາລູກໜີ້ໜຶ່ງຄົນ, ເຈົ້າໜີ້ທີ່ມີການຄ້ຳປະກັນໜຶ່ງຄົນ ແລະ ລາຍລະອຽດກ່ຽວກັບຫຼັກຊັບຄ້ຳປະກັນໜຶ່ງປະເພດ;

2. ການແຈ້ງກ່ຽວກັບການສືບຕໍ່ການຄໍ້າປະກັນ ແມ່ນການສືບຕໍ່ໃຫ້ມີຜົນສັກສິດໃນການແຈ້ງໃດໜຶ່ງ ແມ່ນຈະດຳເນີນໄປຈົນກວ່າມື້ສິ້ນສຸດອາຍຸຂອງການແຈ້ງດັ່ງກ່າວໃນປີທີຫ້າ. ການແຈ້ງກ່ຽວກັບການສືບຕໍ່ການຄໍ້າປະກັນສາມາດຈົດທະບຽນໄດ້ພາຍໃນໄລຍະຫົກເດືອນກ່ອນມື້ໝົດອາຍຸເທົ່ານັ້ນ;

3. ການແຈ້ງກ່ຽວກັບການຍົກເລີກການຄໍ້າປະກັນ ແມ່ນການແຈ້ງກ່ຽວກັບການຍົກເລີກການຈົດທະບຽນການຄໍ້າປະກັນຈະບໍ່ເຮັດໃຫ້ການແຈ້ງຈົດທະບຽນດັ່ງກ່າວຖືກລຶບອອກຈາກຖານຂໍ້ມູນພຽງແຕ່ສະແດງໃຫ້ເຫັນວ່າສະພາບຂອງການແຈ້ງຈົດທະບຽນດັ່ງກ່າວໄດ້ຖືກປ່ຽນແປງໄປ. ການແຈ້ງກ່ຽວກັບການຍົກເລີກການຈົດທະບຽນການຄໍ້າປະກັນສາມາດຖືກຈົດທະບຽນໄດ້ ກ່ອນທີ່ການແຈ້ງຈົດທະບຽນທີ່ກ່ຽວຂ້ອງຈະໝົດອາຍຸເທົ່ານັ້ນ. ການຍົກເລີກຜົນສັກສິດຂອງການແຈ້ງຈົດທະບຽນການຄໍ້າປະກັນສາມາດດຳເນີນດ້ວຍສອງວິທີຄື:

ກ. ການແຈ້ງຈົດທະບຽນກ່ຽວກັບການຍົກເລີກການຄໍ້າປະກັນ ສາມາດແຈ້ງຈົດທະບຽນໂດຍ ຫຼື ໃນນາມເຈົ້າໜີ້ມີການຄໍ້າປະກັນເພື່ອຍົກເລີກຜົນສັກສິດຂອງການແຈ້ງຈົດທະບຽນການຄໍ້າປະກັນເບື້ອງຕົ້ນຕາມການຕົກລົງຂອງເຈົ້າໜີ້ທີ່ມີການຄໍ້າປະກັນ. ສາມາດເຮັດການແຈ້ງກ່ຽວກັບການຍົກເລີກການແຈ້ງຈົດທະບຽນການຄໍ້າປະກັນຫຼາຍຄັ້ງທີ່ຖືກຈົດທະບຽນ ສຳລັບການແຈ້ງຈົດທະບຽນໃນເບື້ອງຕົ້ນອັນດຽວກັນ, ຖ້າວ່າເຈົ້າໜີ້ທີ່ມີການຄໍ້າປະກັນແຕ່ລະຄົນໄດ້ຈົດທະບຽນການຍົກເລີກການຄໍ້າປະກັນສະເພາະຂອງຕົນຕ່າງຫາກ;

ຂ. ຖ້າວ່າເຈົ້າໜີ້ທີ່ມີການຄໍ້າປະກັນ ບໍ່ສາມາດແຈ້ງຈົດທະບຽນຍົກເລີກການຄໍ້າປະກັນ ໃນເມື່ອສິ້ນສຸດພັນທະທີ່ມີການຄໍ້າປະກັນ ຫຼື ໃນເມື່ອເຈົ້າໜີ້ກຳນົດວ່າການແຈ້ງທີ່ມີການຈົດທະບຽນ ຊີ້ໃຫ້ເຫັນວ່າຊື່ຂອງລູກໜີ້ບໍ່ຖືກຕ້ອງ ຫຼື ບໍ່ມີຜົນສັກສິດ ຫຼື ດ້ວຍເຫດຜົນໃດໜຶ່ງຊຶ່ງລູກໜີ້ເຫັນວ່າ: ຜົນສັກສິດຂອງການແຈ້ງທີ່ຖືກຈົດທະບຽນນັ້ນຕ້ອງໄດ້ຖືກຍົກເລີກ, ລູກໜີ້ສາມາດລິເລີ່ມການສົ່ງການແຈ້ງ ເພື່ອໃຫ້ມີການຍົກເລີກການຄໍ້າປະກັນໂດຍການຂໍໃຫ້ສານທີ່ມີສິດອຳນາດອອກຄຳສັ່ງໃຫ້ຍົກເລີກການຈົດທະບຽນດັ່ງກ່າວ. ຫຼັງຈາກນັ້ນລູກໜີ້ສາມາດສົ່ງຄຳສັ່ງຂອງສານໃຫ້ແກ່ຫ້ອງການຈົດທະບຽນ ແລະ ເຈົ້າໜ້າທີ່ຂອງຫ້ອງການຈົດທະບຽນຈະລົງຂໍ້ມູນກ່ຽວກັບການຍົກເລີກການແຈ້ງຈົດທະບຽນເຂົ້າໃນລະບົບການຈົດທະບຽນຄໍ້າປະກັນພ້ອມທັງລະບຸຊື່ຂອງສານທີ່ອະນຸຍາດໃຫ້ມີການຍົກເລີກການແຈ້ງດັ່ງກ່າວ.

### ມາດຕາ 11 ການທົບທວນຂໍ້ມູນ ແລະ ການຍື່ນການຈົດທະບຽນ-ຄວາມສ່ຽງຕໍ່ຂໍ້ຜິດພາດ

1. ພາຍຫຼັງທີ່ຂໍ້ມູນທັງຫມົດ ໄດ້ຖືກປ້ອນເຂົ້າໂດຍຜູ້ຈົດທະບຽນແລ້ວ ລະບົບຈະສະແດງຂໍ້ມູນໂດຍສັງລວມເພື່ອໃຫ້ຜູ້ກ່ຽວສາມາດທົບທວນຄືນອີກເທື່ອໜຶ່ງ. ຜູ້ຈົດທະບຽນຈະທົບທວນຂໍ້ມູນອີກເທື່ອໜຶ່ງເພື່ອຮັບປະກັນຄວາມຖືກຕ້ອງກ່ອນທີ່ຈະສົ່ງຂໍ້ມູນໄປຍັງຖານຂໍ້ມູນຂອງຫ້ອງການຈົດທະບຽນ. ຖ້າຫາກພົບເຫັນຂໍ້ມູນທີ່ຜິດພາດ ຜູ້ຈົດທະບຽນຈະຕ້ອງດັດແກ້ຄືນແລ້ວຈຶ່ງສົ່ງ. ພາຍຫຼັງທີ່ຂໍ້ມູນຖືກສົ່ງໄປຍັງຖານຂໍ້ມູນແລ້ວຈະບໍ່ສາມາດປ່ຽນແປງໄດ້ ແລະ ຜູ້ທີ່ຊອກຄົ້ນຂໍ້ມູນສາມາດເຫັນຂໍ້ມູນດັ່ງກ່າວທັນທີ;
2. ຖ້າຂໍ້ມູນທີ່ຖືກສົ່ງເຂົ້າລະບົບນັ້ນຫາກມີຂໍ້ຜິດພາດ ຊຶ່ງເຮັດໃຫ້ແຈ້ງການຈົດທະບຽນກ່ຽວກັບການຄໍ້າປະກັນນັ້ນບໍ່ມີຜົນສັກສິດເຈົ້າໜີ້ທີ່ມີການຄໍ້າປະກັນຈະເປັນຜູ້ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ. ຫ້ອງການຈົດທະບຽນຈະບໍ່ຮັບຜິດຊອບຕໍ່ຄວາມບໍ່ຖືກຕ້ອງ ຫຼື ຄວາມບໍ່ມີຈິງຂອງຂໍ້ມູນຢູ່ໃນການແຈ້ງຈົດທະບຽນທີ່ແຈ້ງໄປລະບົບນອກຈາກວ່າຄວາມບໍ່ຖືກຕ້ອງນັ້ນເກີດຂຶ້ນຈາກຂໍ້ຜິດພາດໃນການເຮັດວຽກຂອງລະບົບເຕັກໂນໂລຊີຂໍ້ມູນຂ່າວສານຂອງຫ້ອງການຈົດທະບຽນ.

### ມາດຕາ 12 ເຫດຜົນ ແລະ ຂັ້ນຕອນກ່ຽວກັບການປະຕິເສດການຈົດທະບຽນ

1. ຖ້າຜູ້ຈົດທະບຽນ ປ້ອນຂໍ້ມູນຜິດພາດເຂົ້າລະບົບ ແລະ ພົບເຫັນໂດຍຊອບແວຂອງຫ້ອງການຈົດທະບຽນລະ

ບົບຈົດທະບຽນຈະບໍ່ຮັບເອົາການແຈ້ງດັ່ງກ່າວເຂົ້າຖານຂໍ້ມູນຈົນກ່ວາຈະມີການແກ້ໄຂຂໍ້ຜິດພາດດັ່ງກ່າວນັ້ນ. ໃນກໍລະນີນີ້ລະບົບຈົດທະບຽນຈະສະແດງຂໍ້ຜິດພາດໃຫ້ເຫັນໃນທັນທີ ພ້ອມທັງຊີ້ບອກວິທີການແກ້ໄຂທີ່ຈໍາເປັນດ້ວຍ. ຜູ້ຈົດທະບຽນສາມາດດັດແກ້ຂໍ້ມູນແລ້ວສົ່ງເຂົ້າລະບົບອີກເທື່ອໜຶ່ງ.

2. ເຫດຜົນ ທີ່ຈະເຮັດໃຫ້ ຊອບແວປະຕິເສດການແຈ້ງຈົດທະບຽນ ລວມມີ ດັ່ງນີ້:
   ກ. ຊ່ອງທີ່ຕ້ອງຕື່ມຂໍ້ມູນແບບບັງຄັບ ແມ່ນບໍ່ມີຂໍ້ມູນ;
   ຂ. ຊ່ອງຂໍ້ມູນສະເພາະສໍາລັບພິມຕົວໜັງສື ຫຼື ຕົວເລກມີປະເພດຂໍ້ມູນທີ່ບໍ່ຖືກຕ້ອງ;
   ຄ. ຄ່າບໍລິການບໍ່ໄດ້ຖືກຊໍາລະ ຫຼື ຈ່າຍໂດຍບັນຊີຂອງຜູ້ຈົດທະບຽນ ທີ່ຮັກສາໄວ້ຢູ່ກັບຫ້ອງການຈົດທະບຽນ;
   ງ. ໃນກໍລະນີມີການແຈ້ງຈົດທະບຽນ, ການປ່ຽນແປງການຄໍ້າປະກັນໃນເບື້ອງຕົ້ນ ດັ່ງລຸ່ມນີ້:
      (1) ເລກທີທະບຽນຂອງການແຈ້ງຈົດທະບຽນການຄໍ້າປະກັນໃນເບື້ອງຕົ້ນ ບໍ່ຖືກຕ້ອງ ຫຼື ເລກທີດັ່ງກ່າວໄດ້ໝົດກໍານົດໄປແລ້ວ;
      (2) ບໍ່ມີການລະບຸເຈົ້າໜີ້ທີ່ມີການຄໍ້າປະກັນຢ່າງໜ້ອຍໜຶ່ງຄົນຂຶ້ນໄປ.
   ຈ. ໃນກໍລະນີມີການແຈ້ງຈົດທະບຽນກ່ຽວກັບການສືບຕໍ່ການຄໍ້າປະກັນໃນເບື້ອງຕົ້ນ ການແຈ້ງຈົດທະບຽນດັ່ງກ່າວບໍ່ໄດ້ເຮັດຂຶ້ນພາຍໃນ ຫົກເດືອນກ່ອນມື້ສິ້ນສຸດອາຍຸຂອງແຈ້ງການຈົດທະບຽນ.

## ມາດຕາ 13 ການຢັ້ງຢືນການຈົດທະບຽນການຄໍ້າປະກັນ

ໃນເມື່ອຜູ້ຈົດທະບຽນໄດ້ສົ່ງຂໍ້ມູນການແຈ້ງຈົດທະບຽນການຄໍ້າປະກັນທີ່ບໍ່ມີການປະຕິເສດເຂົ້າໃນລະບົບ, ລະບົບເຕັກໂນໂລຊີຂໍ້ມູນຂ່າວສານຈະສ້າງໃບຢັ້ງຢືນຂຶ້ນ ຊຶ່ງຜູ້ແຈ້ງຈົດທະບຽນສາມາດພິມອອກໄດ້ ຫຼື ອັດເອົາເອກະສານດັ່ງກ່າວໄດ້.

## ມາດຕາ 14 ການຮັບ ຫຼື ການປະຕິເສດ ການແຈ້ງຈົດທະບຽນ ແບບອັດຕາໂນມັດ

ການຮັບ ຫຼື ການປະຕິເສດການແຈ້ງຈົດທະບຽນການຄໍ້າປະກັນດ້ວຍສັງຫາລິມະຊັບແບບອັດຕາໂນມັດແມ່ນດໍາເນີນໃນກໍລະນີ ດັ່ງນີ້:

1. ຫ້ອງການຈົດທະບຽນ ຈະບໍ່ກວດກາການແຈ້ງຈົດທະບຽນ ເພື່ອກໍານົດວ່າການແຈ້ງຈົດທະບຽນດັ່ງກ່າວມີເນື້ອໃນຄົບຖ້ວນຕາມກົດໝາຍກໍານົດ ຫຼື ບໍ່. ຊອບແວຂອງຫ້ອງການຈົດທະບຽນຈະກໍານົດວ່າຂໍ້ມູນທີ່ປ້ອນເຂົ້າລະບົບນັ້ນຄົບຖ້ວນພຽງພໍສໍາລັບການຈົດທະບຽນ ຫຼື ບໍ່? ໂດຍອີງຕາມເງື່ອນໄຂທີ່ໄດ້ກໍານົດໄວ້ໃນມາດຕາ 10, 11 ແລະ 13 ລຸ່ມນີ້. ຖ້າຫາກຂໍ້ມູນບໍ່ພຽງພໍ, ຊອບແວຂອງຫ້ອງການຈົດທະບຽນກໍ່ຈະແຈ້ງໃຫ້ຜູ້ຈົດທະບຽນຊາບໃນທັນທີ, ພ້ອມທັງຊີ້ບອກການດໍາເນີນການທີ່ຈໍາເປັນ ເພື່ອແກ້ໄຂບັນຫາດັ່ງກ່າວ. ການແຈ້ງຈົດທະບຽນຈະຖືກປະຕິເສດຈົນກ່ວາຈະສາມາດປະຕິບັດໄດ້ຕາມເງື່ອນໄຂຕໍ່າສຸດສໍາລັບການຈົດທະບຽນຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການຄໍ້າປະກັນການປະຕິບັດສັນຍາ, ດໍາລັດຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ ແລະ ລະບຽບການສະບັບນີ້;
2. ຖ້າວ່າ ຂໍ້ມູນທີ່ຖືກປ້ອນເຂົ້າລະບົບນັ້ນ ພຽງພໍສໍາລັບການຈົດທະບຽນ ຊອບແວຂອງຫ້ອງການຈົດທະບຽນຈະຮັບເອົາການແຈ້ງຈົດທະບຽນດັ່ງກ່າວ ແລະຈະສ້າງເອກະສານຢັ້ງຢືນການຈົດທະບຽນທີ່ຜູ້ນໍາໃຊ້ສາມາດພິມອອກໄວ້ເປັນຫຼັກຖານຂອງການຈົດທະບຽນ. ການຢັ້ງຢືນການຈົດທະບຽນຈະມີຂໍ້ມູນກ່ຽວກັບວັນທີ ແລະ ເວລາຂອງການຈົດທະບຽນ, ເລກທີຂອງການຈົດທະບຽນທີ່ຫ້ອງການຈົດທະບຽນເປັນຜູ້ມອບໃຫ້ ແລະ ຂໍ້ມູນທັງໝົດທີ່ໄດ້ແຈ້ງຈົດທະບຽນ.

ມາດຕາ 15 ໜ້າທີ່ຂອງຫ້ອງການຈົດທະບຽນໃນການກວດກາການຈົດທະບຽນ

ໃນການກວດກາການຈົດທະບຽນ ຫ້ອງການຈົດທະບຽນມີສິດ ແລະ ໜ້າທີ່ ດັ່ງນີ້:

1. ອອກເລກທີສະເພາະສໍາລັບການແຈ້ງຈົດທະບຽນແຕ່ລະຄັ້ງ ເຊັ່ນ ການແຈ້ງຈົດທະບຽນການຄໍ້າປະກັນເບື້ອງຕົ້ນ ຫຼື ການແຈ້ງຈົດທະບຽນການປ່ຽນແປງການຄໍ້າປະກັນດັ່ງກ່າວ;
2. ຈັດຕັ້ງປະຕິບັດມາດຕະການຮັກສາຄວາມປອດໄພ ເພື່ອຢັ້ງຢືນຜົນສັກສິດຂອງເລກທະບຽນດັ່ງກ່າວແບບອັດຕະໂນມັດໃນເວລາເລກທະບຽນດັ່ງກ່າວຖືກນໍາໃຊ້ຄັ້ງຕໍ່ໄປໂດຍຜູ້ແຈ້ງຈົດທະບຽນເພື່ອເລີ່ມດໍາເນີນການແຈ້ງກ່ຽວກັບການປ່ຽນແປງ ທີ່ພົວພັນກັບການແຈ້ງຈົດທະບຽນເບື້ອງຕົ້ນ;
3. ສ້າງຄວາມເຊື່ອມໂຍງ ລະຫວ່າງການແຈ້ງຈົດທະບຽນ ໃນເບື້ອງຕົ້ນກັບການແຈ້ງຈົດທະບຽນການປ່ຽນແປງຕາມເລກທີຂອງການຈົດທະບຽນການແຈ້ງຈົດທະບຽນເບື້ອງຕົ້ນ;
4. ແຈ້ງບອກວັນ ແລະ ເວລາ ຂອງການຈົດທະບຽນການຄໍ້າປະກັນໃນເບື້ອງຕົ້ນ ແລະ ການຈົດທະບຽນກ່ຽວກັບການປ່ຽນແປງທີ່ກ່ຽວຂ້ອງ;
5. ຮັກສາບົດບັນທຶກ ຂອງແຕ່ລະການແຈ້ງຈົດທະບຽນ ເພື່ອໃຫ້ປະຊາຊົນສາມາດກວດກາໄດ້ຕໍ່ໄປອີກຫ້າປີ. ຫຼັງຈາກການສິ້ນສຸດອາຍຸຂອງການແຈ້ງດັ່ງກ່າວ ໂດຍນັບແຕ່ມື້ມີການແຈ້ງຈົດທະບຽນເບື້ອງຕົ້ນ, ນອກຈາກວ່າຈະມີການຈົດທະບຽນ ການແຈ້ງກ່ຽວກັບການສືບຕໍ່ຄໍ້າປະກັນກ່ອນມື້ໝົດອາຍຸ, ໃນກໍລະນີນີ້, ຂໍ້ມູນທີ່ກ່ຽວຂ້ອງຈະຖືກຮັກສາໄວ້ຈົນເຖິງມື້ໝົດອາຍຸຂອງການແຈ້ງຈົດທະບຽນຄັ້ງໃໝ່;
6. ຮັກສາການແຈ້ງຈົດທະບຽນ ທີ່ໝົດອາຍຸຢູ່ໃນສໍາເນົາເອກະສານທີ່ບໍ່ເຜີຍແຜ່ໃຫ້ສາທາລະນະຊົນ ຢ່າງໜ້ອຍເປັນໄລຍະເວລາຫ້າປີຫຼັງຈາກມື້ສິ້ນສຸດອາຍຸຄັ້ງສຸດທ້າຍຂອງການແຈ້ງດັ່ງກ່າວ. ຂໍ້ມູນດັ່ງກ່າວສາມາດຊອກຄົ້ນໄດ້ໂດຍພະນັກງານຂອງຫ້ອງການຈົດທະບຽນເທົ່ານັ້ນ ໃນກໍລະນີຄວາມຈໍາເປັນຕ້ອງນໍາໃຊ້ ເພື່ອເປັນຫຼັກຖານໃນການແກ້ຂໍ້ຂັດແຍ່ງໃນເວລາມີການດໍາເນີນຄະດີຢູ່ສານ.

## ໝວດທີ IV
## ການຊອກຫາຂໍ້ມູນທີ່ມີການແຈ້ງຈົດທະບຽນ

ມາດຕາ 16 ວິທີການໃນການເຂົ້າຫາລະບົບຈົດທະບຽນ ເພື່ອຊອກຫາຂໍ້ມູນທີ່ມີການແຈ້ງຈົດທະບຽນ

ບຸກຄົນໃດໜຶ່ງສາມາດຊອກຫາຂໍ້ມູນໃນລະບົບຈົດທະບຽນໄດ້ ດັ່ງນີ້:

1. ສາມາດຊອກຫາຂໍ້ມູນກ່ຽວກັບການແຈ້ງຈົດທະບຽນ ໂດຍການຊອກຫາຂໍ້ມູນຢູ່ໃນຖານຂໍ້ມູນຜ່ານທາງແວບໄຊຂອງຫ້ອງການຈົດທະບຽນໂດຍບໍ່ຈໍາເປັນຕ້ອງໃສ່ລະຫັດເພື່ອເຂົ້າສູ່ລະບົບ ຫຼື ຈ່າຍຄ່າບໍລິການ ແລະ ໂດຍບໍ່ຈໍາເປັນຕ້ອງໃຫ້ເລກບັດປະຈໍາຕົວ ຫຼື ຫຼັກຖານໃດໜຶ່ງກ່ຽວກັບຄວາມຈໍາເປັນສໍາລັບການຂໍເອົາຂໍ້ມູນດັ່ງກ່າວ;
2. ສາມາດໄດ້ຮັບຜົນການຊອກຄົ້ນທີ່ມີການຢັ້ງຢືນດ້ວຍການໃສ່ລະຫັດ ເພື່ອເຂົ້າລະບົບແວບໄຊ ແລະ ຮ້ອງຂໍຊອກຄົ້ນຂໍ້ມູນທີ່ມີການຢັ້ງຢືນເທົ່ານັ້ນ. ບຸກຄົນທີ່ກ່ຽວຂ້ອງຕ້ອງເປັນຜູ້ດໍາເນີນການຊອກຄົ້ນ ແລະ ລະບົບໄອທີຂອງຫ້ອງການຈົດທະບຽນຈະສ້າງຜົນການຊອກຄົ້ນ ແລະ ໃບຢັ້ງຢືນຂອງຫ້ອງການຈົດທະບຽນຈະສະແດງໃຫ້ເຫັນວັນ ແລະ ເວລາຂອງການຊອກຄົ້ນ ແລະ ເງື່ອນໄຂທີ່ນໍາໃຊ້ເຂົ້າໃນການຊອກຄົ້ນລະບົບໄອທີຈະກໍານົດເລກທີໃຫ້ຜົນການຊອກຄົ້ນ ແລະ ຮັກສາສະບັບໜຶ່ງໃນຖານຂໍ້ມູນ. ຖ້າຜູ້ຊອກຄົ້ນຕ້ອງການໃບຢັ້ງຢືນສະບັບແທ້ພະນັກງານທີ່ມີສິດທີ່ກ່ຽວຂ້ອງຢູ່ໃນຫ້ອງການຈົດທະບຽນຈະເປັນຜູ້ພິມຜົນການຊອກຄົ້ນ ແລະ ອອກໃບຢັ້ງຢືນສະບັບແທ້ໃຫ້ຜູ້ກ່ຽວ. ໃນກໍລະນີນີ້ຈະມີການເກັບຄ່າບໍລິການ.

ມາດຕາ 17 ປະເພດວິທີການຊອກຄົ້ນ

ຜູ້ທີ່ຊອກຄົ້ນຂໍ້ມູນ ສາມາດເລືອກປະເພດຂອງການຊອກຄົ້ນ ດ້ວຍສາມປະເພດ ດັ່ງນີ້:

ກ. ເລກທີຈົດທະບຽນຂອງການແຈ້ງການຄ້ຳປະກັນໃນເບື້ອງຕົ້ນ;

ຂ. ຂໍ້ມູນສະເພາະຂອງລູກໜີ້;

ຄ. ເລກທະບຽນວິສາຫະກິດ;

ງ. ເລກກຳກັບສະເພາະ ຫຼື ເລກຖັງຂອງຍານພາຫະນະ.

1. ການຊອກຄົ້ນດ້ວຍເລກທີທະບຽນຂອງການແຈ້ງຈົດທະບຽນການຄ້ຳປະກັນໃນເບື້ອງຕົ້ນ.

ໃນເວລາດຳເນີນການຊອກຄົ້ນໂດຍອີງໃສ່ເລກທີຂອງການແຈ້ງຈົດທະບຽນໃນເບື້ອງຕົ້ນ, ຜູ້ຊອກຄົ້ນຕ້ອງພິມເລກທະບຽນຂອງແຈ້ງການຈົດທະບຽນການຄ້ຳປະກັນໃນເບື້ອງຕົ້ນທີ່ກ່ຽວຂ້ອງເຂົ້າລະບົບ.ລະບົບຈົດທະບຽນຈະດຳເນີນການຊອກຄົ້ນໃນຖານຂໍ້ມູນເພື່ອຊອກຫາແຈ້ງການທີ່ມີຜົນສັກສິດທີ່ມີເລກທີ່ກົງກັນກັບເລກທີທີ່ຖືກປ້ອນເຂົ້າລະບົບ. ຖ້າມີການພົບເຫັນແຈ້ງການທີ່ມີຜົນສັກສິດຢູ່ໃນລະບົບ, ລະບົບຈະສະແດງໃຫ້ເຫັນການແຈ້ງຈົດທະບຽນການຄ້ຳປະກັນໃນເບື້ອງຕົ້ນ ແລະ ການແຈ້ງການປ່ຽນແປງທັງໝົດ. ຖ້າວ່າບໍ່ມີການແຈ້ງທີ່ມີຜົນສັກສິດຕາມເລກທີ່ກົງກັນ, ລະບົບກໍ່ຈະສະແດງວ່າບໍ່ມີຜົນໃນການຊອກຄົ້ນ. ຜູ້ຊອກຄົ້ນສາມາດພິມ ຫຼື ອັດເອົາຜົນຂອງການຊອກຄົ້ນໄວ້.

2. ການຊອກຄົ້ນດ້ວຍຂໍ້ມູນສະເພາະຂອງລູກໜີ້.

ຖ້າວ່າການຊອກຄົ້ນຫາກໄດ້ດຳເນີນໂດຍອີງໃສ່ຂໍ້ມູນສະເພາະຂອງລູກໜີ້ ຜູ້ຊອກຄົ້ນຕ້ອງເລືອກປະເພດຂອງລູກໜີ້ເພື່ອດຳເນີນການຊອກຄົ້ນປະເພດຕ່າງໆລວມມີ: ພົນລະເມືອງລາວ, ຄົນຕ່າງປະເທດ, ວິສາຫະກິດຂອງລາວ ຫຼື ຂອງຕ່າງປະເທດທີ່ຈົດທະບຽນຢູ່ ສປປ ລາວ ແລະ ວິສາຫະກິດຕ່າງປະເທດທີ່ບໍ່ໄດ້ຈົດທະບຽນຢູ່ ສປປ ລາວ. ລະບົບຈົດທະບຽນຈະດຳເນີນການຊອກຄົ້ນຂໍ້ມູນກ່ຽວກັບການແຈ້ງຈົດທະບຽນ ຊຶ່ງລູກໜີ້ໄດ້ຖືກລະບຸໃຫ້ເຫັນຢູ່ໃນການແຈ້ງຈົດທະບຽນເບື້ອງຕົ້ນ ແລະ/ຫຼື ການແຈ້ງກ່ຽວກັບການປ່ຽນແປງການຈົດທະບຽນດັ່ງກ່າວ. ມາດຕະຖານເງື່ອນໄຂ ແລະ ວິທີການຊອກຄົ້ນໂດຍອີງໃສ່ລູກໜີ້ແຕ່ລະປະເພດ ມີດັ່ງນີ້:

ກ. ຖ້າລູກໜີ້ເປັນພົນລະເມືອງລາວ, ຜູ້ຊອກຄົ້ນຕ້ອງປ້ອນ ຊື່ ແລະ ນາມສະກຸນຂອງລູກໜີ້ ເປັນຕົວອັກສອນລາວຢູ່ໃນຫ້ອງສະເພາະ, ຖ້າລູກໜີ້ມີພຽງຊື່ເທົ່ານັ້ນ, ຜູ້ຊອກຄົ້ນຕ້ອງຂຽນລົງໃສ່ຫ້ອງສຳລັບຊື່ ແລະ ຂຽນວ່າ "ບໍ່ມີ" ໃນຫ້ອງສຳລັບນາມສະກຸນ ແລະ/ຫຼື ພິມເລກບັດປະຈຳຕົວ 13 ຕົວເລກ ຂອງລູກໜີ້ໃສ່, ຖ້າເລກບັດບໍ່ເຖິງ 13 ຕົວ ແມ່ນໃຫ້ພິມເລກ 0 ໃສ່ທາງໜ້າຂອງເລກບັດປະຈຳຕົວດັ່ງກ່າວ. ລະບົບຈົດທະບຽນຈະຊອກຄົ້ນຂໍ້ມູນໃນຖານຂໍ້ມູນ ເພື່ອຊອກຫາການແຈ້ງທີ່ມີຜົນສັກສິດ ຊື່ ແລະ ນາມສະກຸນຂອງລູກໜີ້ ແລະ/ຫຼື ພິມເລກບັດປະຈຳຕົວ ແມ່ນຖືກຕ້ອງກັບຊື່ ແລະ ນາມສະກຸນ ແລະ/ຫຼື ພິມເລກບັດປະຈຳຕົວ ທີ່ຜູ້ຊອກຄົ້ນໄດ້ພິມເຂົ້າໃສ່ລະບົບ;

ຂ. ຖ້າລູກໜີ້ເປັນຄົນຕ່າງປະເທດ, ຜູ້ຊອກຄົ້ນຕ້ອງຂຽນນາມສະກຸນຕາມຕົວອັກສອນລາຕິນ ຕາມນາມສະກຸນທີ່ເຫັນຢູ່ໃນໜັງສືຜ່ານແດນຂອງຄົນຕ່າງປະເທດ. ລະບົບຈົດທະບຽນຈະດຳເນີນການຊອກຄົ້ນຖານຂໍ້ມູນເພື່ອຊອກຫາການແຈ້ງທີ່ມີຜົນສັກສິດ ຊຶ່ງການພິມນາມສະກຸນຂອງລູກໜີ້ໃນຫ້ອງດັ່ງກ່າວແມ່ນຖືກຕ້ອງກັບນາມສະກຸນ ຫຼື ຊື່ທີ່ພິມເຂົ້າສູ່ລະບົບໂດຍຜູ້ຊອກຄົ້ນໂດຍບໍ່ຈຳເປັນຕ້ອງພິມຊື່ເຂົ້າໃນຊ່ອງຂອງການແຈ້ງດັ່ງກ່າວ.

3. ການຊອກຄົ້ນ ເລກທະບຽນວິສາຫະກິດ ຫຼື ເລກທະບຽນວິສາຫະກິດໃນໃບອະນຸຍາດລົງທຶນໃນຂະແໜງສຳປະທານ. ຖ້າລູກໜີ້ເປັນວິສາຫະກິດຂອງລາວ ຫຼື ວິສາຫະກິດຂອງຕ່າງປະເທດທີ່ຈົດທະບຽນຢູ່ ສປປ ລາວ: ຜູ້ຊອກຄົ້ນຕ້ອງຂຽນເລກທະບຽນຂອງວິສາຫະກິດລົງໃສ່ລະບົບ. ລະບົບທະບຽນຈະຊອກຄົ້ນຖານຂໍ້ມູນ ເພື່ອຊອກຫາການແຈ້ງຈົດທະບຽນທີ່ມີຜົນສັກສິດ ຊຶ່ງໝາຍເລກທະບຽນວິສາຫະກິດຂອງລູກໜີ້ແມ່ນຖືກຕ້ອງກັບໝາຍເລກທີ່ພິມເຂົ້າລະບົບ.

ຖ້າລູກໜີ້ເປັນວິສາຫະກິດຂອງຕ່າງປະເທດ ທີ່ບໍ່ໄດ້ຈົດທະບຽນຢູ່ ສປປ ລາວ ຜູ້ຊອກຄົ້ນຕ້ອງຂຽນຊື່ຂອງອົງກອນຕາມຕົວອັກສອນລາຕິນລົງໃນລະບົບ. ຖ້າຊື່ການຈັດຕັ້ງບໍ່ເປັນຕົວອັກສອນລາຕິນ, ກໍ່ຕ້ອງແປເປັນອັກສອນລາຕິນກ່ອນຈະພິມເຂົ້າໃນລະບົບ. ລະບົບທະບຽນຈະປ່ຽນແປງຊື່ໃຫ້ເປັນປົກກະຕິໂດຍ (1) ເອົາຄໍາສັບທີ່ບໍ່ເຮັດໃຫ້ຊື່ຂອງວິສາຫະກິດມີລັກສະນະສະເພາະອອກ ເປັນຕົ້ນ "The" ແລະ "and" ແລະ ຄໍາສັບຕົວອັກສອນຫຍໍ້ ຫຼື ປະໂຫຍກທີ່ຊີ້ໃຫ້ເຫັນປະເພດຂອງນິຕິບຸກຄົນ; (2) ເອົາວັນນະຍຸດ, ຕົວອັກສອນສະເພາະແລະ ເລກລະຫັດສະເພາະອອກ; (3) ຮັກສາຕົວອັກສອນທີ່ຍັງເຫຼືອໄວ້, ຫຼັງຈາກນັ້ນລະບົບຈົດທະບຽນຈະຊອກຄົ້ນຫາລາຍການທີ່ເປັນຊື່ຂອງວິສາຫະກິດຂອງຕ່າງປະເທດທີ່ບໍ່ໄດ້ຈົດທະບຽນຢູ່ ສປປ ລາວ ຢູ່ໃນຖານຂໍ້ມູນ ເພື່ອຊອກຫາການແຈ້ງທີ່ມີຜົນສັກສິດ ຊຶ່ງຊື່ດັ່ງກ່າວແມ່ນຖືກຕ້ອງກັບຊື່ທີ່ພິມໃສ່. ຖ້າວ່າມີການແຈ້ງທີ່ມີຜົນສັກສິດທີ່ພົບເຫັນ, ການແຈ້ງຈົດທະບຽນໃນເບື້ອງຕົ້ນ ແລະ ການແຈ້ງທັງໝົດທີ່ກ່ຽວຂ້ອງຈະຖືກສະແດງໃຫ້ເຫັນ. ຖ້າວ່າບໍ່ສາມາດພົບເຫັນການແຈ້ງທີ່ມີຜົນສັກສິດ ລະບົບທະບຽນຈະສະແດງຜົນຂອງການຊອກຄົ້ນວ່າບໍ່ພົບເຫັນຂໍ້ມູນ. ຜູ້ຊອກຄົ້ນສາມາດພິມ ຫຼື ອັດເອົາຜົນການຊອກຄົ້ນໄວ້ໄດ້.

4. ການຊອກຄົ້ນດ້ວຍເລກກໍາກັບສະເພາະ ຫຼື ເລກຖັງຂອງຍານພາຫະນະ.

ການຊອກຄົ້ນດ້ວຍເລກກໍາກັບສະເພາະ ຫຼື ເລກຖັງຂອງຍານພາຫະນະ ຜູ້ຊອກຄົ້ນຕ້ອງພິມເລກຖັງຂອງຍານພາຫະນະໃສ່ລະບົບ. ລະບົບຈົດທະບຽນຈະຊອກຄົ້ນຖານຂໍ້ມູນ ເພື່ອຊອກຫາການແຈ້ງຈົດທະບຽນທີ່ມີຜົນສັກສິດເພື່ອຊອກຫາເລກຖັງຂອງຍານພາຫະນະທີ່ຖືກຕ້ອງກັບເລກທະບຽນທີ່ພິມໃສ່ລະບົບ. ຖ້າວ່າພົບເຫັນການແຈ້ງທີ່ມີຜົນສັກສິດ, ລະບົບຈະສະແດງໃຫ້ເຫັນການແຈ້ງຈົດທະບຽນເບື້ອງຕົ້ນ ແລະ ການແຈ້ງປ່ຽນແປງການຈົດທະບຽນທັງໝົດທີ່ກ່ຽວຂ້ອງ. ຖ້າວ່າບໍ່ສາມາດພົບເຫັນການແຈ້ງທີ່ມີຜົນສັກສິດ, ລະບົບຈົດທະບຽນຈະສະແດງຜົນຂອງການຊອກຄົ້ນວ່າບໍ່ພົບເຫັນຂໍ້ມູນ. ຜູ້ຊອກຄົ້ນສາມາດພິມ ຫຼື ອັດເອົາຜົນການຊອກຄົ້ນໄວ້ໄດ້.

## ໝວດທີ V
## ໄລຍະຂ້າມຜ່ານສໍາລັບການຄໍ້າປະກັນດ້ວຍ
## ສັງຫາລິມະຊັບທີ່ເກີດຂຶ້ນກ່ອນການສ້າງຕັ້ງລະບົບ

### ມາດຕາ 18 ການແຈ້ງຈົດທະບຽນການຄໍ້າປະກັນທີ່ເກີດຂຶ້ນກ່ອນ

ເຈົ້າໜີ້ທີ່ມີການຄໍ້າປະກັນ ຢູ່ໃນຫຼັກຊັບໃດໜຶ່ງສາມາດຈົດທະບຽນກ່ຽວກັບການຄໍ້າປະກັນດັ່ງກ່າວໃນລະບົບຈົດທະບຽນໂດຍເງື່ອນໄຂອັນດຽວກັນທີ່ມີຜົນບັງຄັບໃຊ້ຕໍ່ການຄໍ້າປະກັນໃໝ່.

### ມາດຕາ 19 ບູລິມະສິດຂອງການຄໍ້າປະກັນທີ່ເກີດຂຶ້ນກ່ອນ

ລະບຽບການກ່ຽວກັບບູລິມະສິດຂອງການຄໍ້າປະກັນທີ່ເກີດຂຶ້ນກ່ອນແມ່ນອັນດຽວກັນກັບລະບຽບການກ່ຽວກັບການຄໍ້າປະກັນໃໝ່ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 15 ແລະ ມາດຕາອື່ນໆຂອງດໍາລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຄໍ້າປະກັນການປະຕິບັດສັນຍາ.

# ໝວດທີ VI
# ການຊໍາລະຄ່າບໍລິການ ແລະ ການ ຄວບຄຸມການເຂົ້າຫາລະບົບຈົດທະບຽນ

**ມາດຕາ 20 ພື້ນຖານຂອງການກໍານົດຄ່າບໍລິການຈົດທະບຽນ**

1. ກະຊວງການເງິນຈະເກັບຄ່າບໍລິການ ເພື່ອນໍາໃຊ້ເຂົ້າໃນການດໍາເນີນງານຂອງຫ້ອງການຈົດທະບຽນ ແລະ ຄ່າບໍາລຸງຮັກສາລະບົບຈົດທະບຽນດັ່ງກ່າວ. ຄ່າບໍລິການແມ່ນກໍານົດເປັນອັດຕາເດັດຖານໂດຍຂຶ້ນກັບປະເພດຂອງທຸລະກໍາ ຕົວຢ່າງ: ຄ່າບໍລິການເດັດຖານສໍາລັບການຈົດທະບຽນເບື້ອງຕົ້ນ, ຄ່າບໍລິການເດັດຖານສໍາລັບການຊອກຄົ້ນເປັນຕົ້ນ;
2. ຈະບໍ່ມີການເກັບຄ່າບໍລິການສໍາລັບການຈົດທະບຽນຍົກເລີກການແຈ້ງກ່ຽວກັບການຄໍ້າປະກັນ ແລະ ດໍາເນີນການຊອກຄົ້ນ ທີ່ບໍ່ໄດ້ຮັບການຢັ້ງຢືນຜົນ;
3. ກະຊວງການເງິນຈະທົບທວນລາຍຮັບ ແລະ ຄ່າໃຊ້ຈ່າຍຂອງຫ້ອງການຈົດທະບຽນ ໃນທ້າຍປີງົບປະມານຂອງແຕ່ລະປີເພື່ອອອກຂໍ້ຕົກລົງກ່ຽວກັບການປັບຄ່າບໍລິການທີ່ຈໍາເປັນຕາມເງື່ອນໄຂທີ່ກໍານົດໃນຂໍ້ທີ່ 1.

**ມາດຕາ 21 ການບໍລິການທີ່ສາມາດເກັບຄ່າບໍລິການ**

1. ຈະມີການເກັບຄ່າບໍລິການ 20,000 ກີບສໍາລັບການແຈ້ງຈົດທະບຽນການຄໍ້າປະກັນໃນເບື້ອງຕົ້ນ, ການແຈ້ງຈົດທະບຽນດັດແກ້ການຄໍ້າປະກັນ ແລະ ການແຈ້ງຈົດທະບຽນສືບຕໍ່ການຄໍ້າປະກັນ ແລະ ສໍາລັບຜົນຂອງການຊອກຄົ້ນທີ່ໄດ້ຮັບການຢັ້ງຢືນ;
2. ຄ່າບໍລິການ ຈະບໍ່ຖືກເກັບສໍາລັບການແຈ້ງຈົດທະບຽນ ເພື່ອຍົກເລີກການຄໍ້າປະກັນ;
3. ຄ່າບໍລິການ ຈະບໍ່ຖືກເກັບສໍາລັບການແຈ້ງຈົດທະບຽນການຄໍ້າປະກັນຕາມກົດໝາຍທີ່ເປັນພັນທະອາກອນ ຫຼື ການແຈ້ງຈົດທະບຽນການປ່ຽນແປງການຄໍ້າປະກັນດັ່ງກ່າວ.

**ມາດຕາ 22 ວິທີການຊໍາລະຄ່າບໍລິການ ແລະ ການຄວບຄຸມການເຂົ້າເຖິງລະບົບຈົດທະບຽນ**

1. ໂດຍທາງລາຍລັກອັກສອນ ກະຊວງການເງິນ ສາມາດອະນຸຍາດໃຫ້ຜູ້ນໍາໃຊ້ປະຈໍາ ທີ່ເປັນສະຖາບັນເປີດບັນຊີຢູ່ທະນາຄານຕາມທີ່ໄດ້ແຈ້ງໂດຍຫ້ອງການຈົດທະບຽນ ເພື່ອນໍາໃຊ້ໃນການຊໍາລະຄ່າບໍລິການ ແລະ ເພື່ອຄວບຄຸມການເຂົ້າເຖິງລະບົບຈົດທະບຽນຂອງບຸກຄົນທີ່ຖືກວ່າຈ້າງໂດຍຜູ້ນໍາໃຊ້ ທີ່ເປັນສະຖາບັນຜູ້ນໍາໃຊ້ທີ່ເປັນສະຖາບັນການເງິນດັ່ງກ່າວຕໍ່ໄປນີ້ ເອີ້ນວ່າ "ລູກຄ້າ";

ກ. ລູກຄ້າອາດຈະເປັນສະຖາບັນການເງິນ ຫຼື ເປັນທຸລະກິດໃດໜຶ່ງ, ບໍ່ວ່າຈະຖືກຈັດຕັ້ງຂຶ້ນດ້ວຍຮູບການໃດກໍຕາມ ລວມທັງວິສາຫະກິດ ທີ່ຈົດທະບຽນ ຫຼື ວິສາຫະກິດສ່ວນບຸກຄົນ;

ຂ. ລູກຄ້າຕ້ອງສະໜອງລາຍລະອຽດກ່ຽວກັບການຕິດຕໍ່ພົວພັນ ແລະ ມອບໝາຍໃຫ້ບຸກຄົນໜຶ່ງ ຫຼື ຫຼາຍຄົນທີ່ມີສິດອໍານາດໃນການຮັກສາບັນຊີຂອງລູກຄ້າ ແລະ ການເພີ່ມ, ດັດແກ້ ຫຼື ຕັດບຸກຄົນໃດໜຶ່ງອອກຈາກບຸກຄົນທີ່ສາມາດຈົດທະບຽນການແຈ້ງຄໍ້າປະກັນ, ດໍາເນີນການຊອກຄົ້ນທີ່ມີການຢັ້ງຢືນ ແລະ ສາມາດຕັດເງິນໃນບັນຊີເພື່ອຊໍາລະຄ່າບໍລິການ;

ຄ. ລູກຄ້າຈະເປັນຜູ້ຮັບຜິດຊອບຕໍ່ການກະທໍາຂອງຜູ້ນໍາໃຊ້ຂອງຕົນ ເພື່ອຮັບປະກັນຄວາມປອດໄພ ດ້ວຍການປ່ຽນລະຫັດເປັນປະຈໍາ ແລະ ຮັບປະກັນບໍ່ໃຫ້ພະນັກງານທີ່ລາອອກຈາກການຈັດຕັ້ງຂອງຕົນສາມາດເຂົ້າລະບົບໄດ້;

ງ. ຄ່າບໍລິການສໍາລັບທຸລະກໍາໃນການຈົດທະບຽນແຕ່ລະຄັ້ງຈະໄດ້ເກັບຕາມບັນຊີຂອງລູກຄ້າຫຼັງການນໍາໃຊ້ແຕ່ລະຄັ້ງຈະມີການເຊື່ອມໂຍງກັບບັນຊີລູກຄ້າ ແລະ ບຸກຄົນທີ່ນໍາໃຊ້;

ຈ. ຄ່າບໍລິການທັງໝົດທີ່ຈະເກັບໃນບັນຊີຂອງລູກຄ້າໃນແຕ່ລະເດືອນຈະມີການສະຫຼຸບໂດຍລະບົບຈົດທະບຽນເປັນບົດລາຍງານທາງດ້ານເອເລັກໂຕຣນິກ ແລະ ພິມໄວ້ຢູ່ໃນບົດບັນທຶກບັນຊີຂອງລູກຄ້າຢູ່ໃນແອບໄຊຂອງການຈົດທະບຽນ. ການເຂົ້າເຖິງຂໍ້ມູນໃນບັນຊີຂອງລູກຄ້າ,ລວມທັງບົດສະຫຼຸບດັ່ງກ່າວຈະຖືກຄວບຄຸມໂດຍລະຫັດຜ່ານ ແລະ ສິດຂອງຜູ້ນໍາໃຊ້. ການແຈ້ງທີ່ລະບຸວ່າບົດລາຍງານດັ່ງກ່າວໄດ້ຖືກພິມຢູ່ໃນແອບໄຊ ຈະຖືກສົ່ງໃຫ້ຕົວແທນທີ່ມີສິດອໍານາດຂອງລູກຄ້າ ໂດຍຜ່ານທາງອີເມລ.

2. ຫ້ອງການຈົດທະບຽນອະນຸຍາດໃຫ້ຜູ້ຈົດທະບຽນ ເປັນຄັ້ງດຽວສາມາດເຂົ້າແອບໄຊ ຂອງຫ້ອງການຈົດທະບຽນ ແລະ ແຈ້ງຈົດທະບຽນກ່ຽວກັບການຄໍ້າປະກັນ ແລະ ດໍາເນີນການຊອກຄົ້ນທີ່ມີການຢັ້ງຢືນໄດ້ ຖ້າມີການຊໍາລະຄ່າບໍລິການລ່ວງໜ້າຜູ້ຈົດທະບຽນຕ້ອງໃຫ້ລາຍລະອຽດກ່ຽວກັບຕົນເອງ ແລະ ສະໜອງຂໍ້ມູນກ່ຽວກັບການຕິດຕໍ່ພົວພັນໃນເວລາໃຊ້ລະຫັດຜ່ານເຂົ້າໃນແອບໄຊຂອງຫ້ອງການຈົດທະບຽນ. ລະບົບຈົດທະບຽນຈະອະນຸຍາດໃຫ້ຜູ້ຈົດທະບຽນດັ່ງກ່າວດໍາເນີນທຸລະກໍາໄດ້ຫຼາຍຄັ້ງ ເມື່ອເຂົາເຈົ້າໄດ້ຈ່າຍຄ່າບໍລິການທີ່ກ່ຽວຂ້ອງໃຫ້ຫ້ອງການຈົດທະບຽນ.

3. ການຈ່າຍຄ່າບໍລິການໂດຍລູກຄ້າ ແລະ ຜູ້ຈົດທະບຽນຄັ້ງດຽວ ສາມາດເຮັດໄດ້ໂດຍວິທີການ ດັ່ງນີ້:

ກ. ການຊໍາລະດ້ວຍການນໍາໃຊ້ບັດ credit ຫຼື debit ໃນອານາຄົດ.

(1) ຜູ້ນໍາໃຊ້ທີ່ໄດ້ຮັບການອະນຸຍາດຂອງລູກຄ້າສາມາດເຂົ້າໄປໃນແອບໄຊແລ້ວເລືອກວິທີການຊໍາລະດ້ວຍບັດ credit ຫຼື debit. ຜູ້ນໍາໃຊ້ຈະຕ້ອງປ້ອນຂໍ້ມູນລະອຽດຂອງບັດ, ຈໍານວນຂອງຄ່າບໍລິການ ແລະ ລະບົບທະບຽນຈະໃຫ້ການອະນຸຍາດແກ່ຜູ້ກ່ຽວ ແລະ ດໍາເນີນທຸລະກໍາ ແລະ ຈະມີການຕັດເອົາຄ່າບໍລິການຈາກບັນຊີຂອງລູກຄ້າ;

(2) ຜູ້ຈົດທະບຽນຄັ້ງດຽວ ສາມາດເລືອກວິທີຊໍາລະດ້ວຍບັດ credit ຫຼື debit ໃນເວລາເຂົ້າແອບໄຊ. ຈາກນັ້ນຕ້ອງປ້ອນຂໍ້ມູນລະອຽດຂອງບັດ ແລະ ລະບົບຈົດທະບຽນຈະອະນຸຍາດໃຫ້ນໍາໃຊ້ລະບົບຕາມມູນຄ່າເງິນທີ່ກໍານົດໄວ້. ພາຍຫຼັງທີ່ໄດ້ອະນຸມັດຜູ້ນໍາໃຊ້ກໍ່ສາມາດດໍາເນີນທຸລະກໍາໄດ້ ແລະ ຕ້ອງອອກຈາກລະບົບ. ຫຼັງຈາກນັ້ນລະບົບຈົດທະບຽນຈະດໍາເນີນການໃຫ້ອະນຸຍາດ ແລະ ຊໍາລະຄ່າບໍລິການສໍາລັບການດໍາເນີນທຸລະກໍາທັງໝົດ.

ຂ. ການຊໍາລະຜ່ານທະນາຄານ.

(1) ກະຊວງການເງິນຈະເປີດບັນຊີຂອງຫ້ອງການຈົດທະບຽນໂດຍການເຮັດສັນຍາກັບທະນາຄານໃດໜຶ່ງ ເພື່ອຈຸດປະສົງໃນການຮັບເອົາການຈ່າຍຄ່າບໍລິການ ແລະ ບັນຈຸສະຖາບັນດັ່ງກ່າວນັ້ນເຂົ້າໃນລະບົບຈົດທະບຽນ, ທະນາຄານຈະຮັບເອົາຄ່າບໍລິການຈາກລູກຄ້າ ແລະ ຜູ້ຈົດທະບຽນຄັ້ງດຽວ, ອອກໃບຮັບເງິນໃຫ້ແກ່ຜູ້ກ່ຽວ ແລະ ປ້ອນຂໍ້ມູນການຊໍາລະ ແລະ ເລກທີໃບຮັບເງິນເຂົ້າລະບົບຈົດທະບຽນຜ່ານລະບົບການເຊື່ອມຕໍ່ສະເພາະ. ຫ້ອງການຈົດທະບຽນຈະແຈ້ງຊື່ທະນາຄານທີ່ສາມາດຮັບການຊໍາລະຄ່າບໍລິການຜ່ານໃນແອບໄຊຂອງຕົນ.

(2) ລູກຄ້າອາດຈະຊໍາລະຄ່າບໍລິການເປັນລາຍເດືອນ ອີງຕາມໃບສະຫລຸບປະຈໍາເດືອນຜ່ານທະນາຄານດ້ວຍການແຈ້ງບັນຊີລູກຄ້າໃຫ້ທະນາຄານ. ຈະມີການນໍາໃຊ້ບັນຊີລູກຄ້າເພື່ອເຊື່ອມໂຍງຂໍ້ມູນກ່ຽວກັບການຊໍາລະ ແລະ ການໂອນເງິນເຂົ້າບັນຊີຂອງລູກຄ້າ.

(3) ຜູ້ຈົດທະບຽນຄັ້ງດຽວ ສາມາດກໍານົດມູນຄ່າຂອງຄ່າບໍລິການສໍາລັບທຸລະກໍາກ່ຽວກັບການຈົດທະບຽນທີ່ຕົນຕ້ອງການຈະດໍາເນີນຈາກຕາຕະລາງຄ່າບໍລິການ ຢູ່ໃນແອບໄຊຂອງຫ້ອງການຈົດທະບຽນໂດຍການສະໜອງຫຼັກຖານຢັ້ງຢືນກ່ຽວກັບລາຍລະອຽດຂອງຕົນເອງ, ຜູ້ຈົດທະບຽນສາມາດຈ່າຍເງິນຜ່ານທະນາຄານທີ່ກ່ຽວຂ້ອງ ແລ້ວໃຊ້ລະຫັດຜ່ານເຂົ້າແອບໄຊຂອງຫ້ອງການຈົດທະບຽນດ້ວຍການນໍາໃຊ້ເລກທີໃບຮັບເງິນ. ລະບົບຈົດທະບຽນຈະເຊື່ອມໂຍງການນໍາໃຊ້ຂອງຜູ້ຈົດທະບຽນກັບເລກທີໃບຮັບເງິນ ແລະ ອະນຸຍາດໃຫ້ຜູ້ຈົດທະບຽນສາມາດດໍາເນີນທຸລະກໍາຫຼາຍຄັ້ງໄດ້ຕາມການຈ່າຍຄ່າບໍລິການ

ຂອງຜູ້ກ່ຽວ. ຖ້າວ່າຜູ້ຈົດທະບຽນບໍ່ໄດ້ນໍາໃຊ້ຄ່າບໍລິການທັງໝົດທີ່ຕົນໄດ້ຈ່າຍໄປສ່ວນທີ່ຍັງເຫຼືອຈະຖືກຮັກສາໄວ້ ເພື່ອການນໍາໃຊ້ຄັ້ງຕໍ່ໄປໂດຍຜູ້ຈົດທະບຽນເປັນໄລຍະ 30 ວັນ ຫຼັງຈາກນັ້ນມູນຄ່າທີ່ເຫຼືອຈະຖືກຕັດເຂົ້າບັນຊີຂອງຫ້ອງການຈົດທະບຽນ;

ຄ. ການໂອນເງິນຄ່າບໍລິການໂດຍຜ່ານທະນາຄານ.

ລູກຄ້າສາມາດຈ່າຍຄ່າບໍລິການທີ່ຕົນຍັງເປັນໜີ້ໂດຍຜ່ານທະນາຄານໂດຍໂອນຈາກບັນຊີທະນາຄານຂອງຕົນໄປໃສ່ບັນຊີທະນາຄານຂອງຫ້ອງການຈົດທະບຽນ. ລູກຄ້າຕ້ອງສະໜອງເລກບັນຊີຂອງຕົນໄວ້ໃນທຸລະກຳການໂອນ. ທະນາຄານຈະປ້ອນຂໍ້ມູນການຊໍາລະເຂົ້າລະບົບຈົດທະບຽນຢ່າງໜ້ອຍມື້ລະເທື່ອເພື່ອເອົາເງິນເຂົ້າບັນຊີຂອງລູກຄ້າ.

## ໝວດທີ VII
## ບົດບັນຍັດສຸດທ້າຍ

**ມາດຕາ 23 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງຊັບສິນຂອງລັດ ກະຊວງການເງິນ ເປັນເຈົ້າການໃນການຈັດຕັ້ງປະຕິບັດ ລະບຽບການສະບັບນີ້.

**ມາດຕາ 24 ຜົນສັກສິດ**

ລະບຽບການສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ທຸກການຈົດທະບຽນການຄໍ້າປະກັນດ້ວຍສັງຫາລິມະຊັບ ຕ້ອງໄດ້ດໍາເນີນການຕາມລະບຽບການ, ວິທີການ ແລະ ຂັ້ນຕອນ ທີ່ກໍານົດໄວ້ໃນລະບຽບການສະບັບນີ້.

ລັດຖະມົນຕີວ່າການກະຊວງການເງິນ

ພູເພັດ ຄໍາພູນວົງ